**ວັນພຸດຮັບເທົ່າ**

**ວັນທີ 06 ມີນາ 2019**



**ບົດອ່ານຈາກໜັງສືຂອງປະພາສົກຢໍແອນ 2, 12-18**

ພຣະອົງເຈົ້າກ່າວດັ່ງນີ້, ພວກເຈົ້າຈົ່ງກັບໃຈມາຫາເຮົາຢ່າງເຕັມໃຈ. ຈົ່ງອົດອາຫານ, ຈົ່ງຮ້ອງໄຫ້. ຈົ່ງຈີກດວງໃຈ ບໍ່ແມ່ນຈີກເສື້ອຜ້າ. ຈົ່ງຫລົບມາຫາພຣະອົງພຣະເຈົ້າຂອງພວກເຈົ້າ. ຍ້ອນວ່າພຣະອົງຊົງພຣະໄທດີ, ມີຄວາມເວດທະນາແລະຄວາມອົດກັ້ນ, ເຕັມແຕ່ຄວາມເມດຕາ ແລະພ້ອມທີ່ຈະຫລົງລືມຄວາມຜິດສະເໝີ. ໃຜຮູ້ວ່າ ພຣະເປັນເຈົ້າຈະບໍ່ຫັນໜ້າມາຫາພວກເຈົ້າ, ຈະບໍ່ຍົກໂທດ ແລະທານຄວາມອຸດົມສົມບູນໃຫ້. ເພື່ອພວກເຈົ້າຈະໄດ້ມີຫຍັງມາຖະຫວາຍເປັນຂອງບູຊາແດ່ພຣະເຈົ້າຂອງພວກເຈົ້າບໍ?

ພວກເຈົ້າຈົ່ງລັ່ນສຽງແກໃຫ້ດັງສະນັ່ນຢູ່ເມືອງຊີອອນ. ຈົ່ງອອກຄຳສັ່ງໃຫ້ອົດອາຫານ, ຈົ່ງຮຽກຮ້ອງກອງປະຊຸມ, ຈົ່ງຮວບໂຮມພວກລາດສະດອນທັງເຖົ້າທັງໜຸ່ມ ແລະພວກທີ່ຍັງກິນນົມຢູ່ດ້ວຍ. ໃຫ້ຄູ່ຜົວເມຍໃໝ່ອອກຈາກຫ້ອງວິວາ. ພວກພຣະສົງຄົນໃຊ້ຂອງພຣະເຈົ້າ, ຈົ່ງພາກັນຮ້ອງໄຫ້ຢູ່ກາງວັດ ລະຫວ່າງພຣະແທ່ນກັບປະຕູວິຫານ, ພ້ອມກັບຮ້ອງຂຶ້ນວ່າ: ໂອພຣະອົງເຈົ້າ, ຂໍຍົກໂທດໃຫ້ລາດສະດອນຂອງພຣະອົງເທີ້ນ. ຂໍຢ່າປະໃຫ້ພວກທີ່ເປັນມໍລະດົກຂອງພຣະອົງຕ້ອງອັບອາຍຂາຍໜ້າ ຍ້ອນໄດ້ຕົກເປັນຂ້ອຍທາດຂອງຄົນຊາດອື່ນ. ເປັນຫຍັງພຣະອົງຈຶ່ງຍອມໃຫ້ຄົນນອກເວົ້າວ່າ: ພຣະເປັນເຈົ້າຂອງພວກເຮົາຢູ່ໃສ? ພຣະອົງເຈົ້າຮັກຫອມດິນດອນຂອງພຣະອົງ ແລະຍົກໂທດໃຫ້ລາດສະດອນຂອງພຣະອົງດ້ວຍ.

ນີ້ແມ່ນວາຈາຂອງພຣະເປັນເຈົ້າ

**ບົດແບ່ງປັນ: ຢໍແອນ 2, 12-18**

ໃນມື້ທໍາອິດຊຶ່ງພວກເຮົາກ້າວເຂົ້າສູ່ກໍານົດບໍາເພັນສິນ ແລະຄໍາທໍາອິດຂອງບົດອ່ານຈາກໜັງສືຂອງປະພາສົກຢໍແອນ ຊຶ່ງບໍ່ໄດ້ແປໃນສະບັບພາສາລາວນີ້ຄືຄໍາວ່າ: « ດຽວນີ້ ». ເປັນຫຍັງປະພາສົກຢໍແອນຈຶ່ງເລີ່ມຕົ້ນດ້ວຍຄໍາວ່າ: « ດຽວນີ້ » . ຍ້ອນວາຈາທີ່ພຣະເຈົ້າກ່າວກັບພວກເຮົາແຕ່ລະຄົນແມ່ນດຽວນີ້ ແລະໃນວັນນີ້ເອງ. ເພາະ *« ດຽວນີ້ແມ່ນເວລາອັນເໝາະສົມ, ດຽວນີ້ແມ່ນວັນແຫ່ງຄວາມຣອດ »* (2ກຣ 6,2). ເປັນເວລາອັນເໝາະສົມເພື່ອຫຍັງ? ເພື່ອກັບຄືນມາຫາພຣະບິດາຂອງພວກເຮົາຜູ້ສະຖິດຢູ່ສະຫວັນ. ຍ້ອນພຣະອົງຊົງພຣະໄທດີ, ມີຄວາມເມດຕາສົງສານ, ບໍ່ໂກດງ່າຍແຕ່ເຕັມດ້ວຍຄວາມຮັກ ແລະພ້ອມທີ່ຈະໃຫ້ອະໄພພວກເຮົາຢູ່ສະເໝີ. ແລະຮູບພາບທີ່ພວກເຮົາສາມາດຈິນຕະນາການແລະລໍາເພິງພາວະນາຕາມຄໍາເຊື້ອເຊີນຂອງພຣະເຈົ້າໃນທີ່ນີ້ຄື: ລູກລ້າງຜານທີ່ກັບຄືນມາຫາພໍ່ຂອງຕົນດ້ວຍນໍ້າຕາທີ່ອອກມາຈາກຄວາມສໍານຶກຜິດຢ່າງເຕັມໃຈແລະພ້ອມທີ່ຈະຂໍໂທດນໍາພໍ່ຂອງຕົນ. ເພາະລູກຜູ້ນີ້ໝັ້ນໃຈວ່າພໍ່ຂອງເຂົາຈະເມດຕາສົງສານແລະພ້ອມທີ່ຈະໃຫ້ອະໄພຢູ່ສະເໝີ. ຍ້ອນຄວາມເມດຕາສົງສານຂອງຜູ້ເປັນພໍ່ຈະລືມສິ່ງບໍ່ດີທັງໝົດຂອງລູກ, ເພື່ອຈະສານຕໍ່ສາຍສໍາພັນແຫ່ງຮັກລະຫວ່າງຜູ້ເປັນພໍ່ກັບຜູ້ເປັນລູກຊຶ່ງພວກເຮົາຮຽກວ່າ: ການຄືນດີ.

ນັກບຸນເປົາໂລຜູ້ເປັນທູດຂອງພຣະເຈົ້າໃນບົດອ່ານທີສອງຂອງວັນນີ້ໄດ້ວອນຂໍພວກເຮົາ *« ຈົ່ງຄືນດີກັບພຣະເຈົ້າເຖີດ »*. ຍ້ອນພຣະເຢຊູເຈົ້າຜູ້ບໍ່ມີບາບໄດ້ລົງມາຮັບເອົາບາບຂອງມະນຸດ ເພື່ອໃຫ້ມະນຸດທຸກຄົນໄດ້ຄືນດີກັບພຣະບິດາເຈົ້າສະຫວັນຜ່ານທາງພຣະບຸດຂອງພຣະອົງ.

ດັ່ງນັ້ນວັນນີ້, ຖ້າພວກເຮົາໄດ້ຍິນສຽງເອີ້ນຂອງພຣະເຈົ້າ ຂໍໃຫ້ພວກເຮົາຢ່າທໍາໃຈແຂງກະດ້າງອີກຕໍ່ໄປ. ເພາະພຣະອົງເປັນຜູ້ເຕັມພຽບດ້ວຍຄວາມເມດຕາແລະໃຫ້ອະໄພ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ